# ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ຕໍ່ຜູ້ຍິງ ແລະ ຜູ້ຊາຍ

## ຝົນຕົກໜັກ / ໄພນ້ຳຖ້ວມ









## ໄພແຫ້ງແລ້ງ



## ອຸນນະພູມມີການ ປ່ຽນແປງປັ່ນປ່ວນ



## ຜົນຜະລິດຈາກປ່າໄມ້ ແລະ ຜົນຜະລິດກະສິກຳຕົກຕ່ຳ





Norad
THE CENTER FOR PEOPLE AND FORESTS
RECOFTC

แผ่นໂຄສະນາ ທີ 4:

# ການປ່ຽນແປງດິນຟ້າອາກາດ ແລະ ບົດບາດຍິງ-ຊາຍ ມີການກ່ຽວພັນກັບການຄຸ້ມຄອງປ່າໄມ້ແນວໃດ?

## ເນື້ອໃນຂອງແຜ່ນໂຄສະນາ:

ເນື່ອງຈາກວ່າ ປ່າໄມ້ ມີບົດບາດສຳຄັນຕໍ່ການຜ່ອນເບົາການປ່ຽນແປງດິນຟ້າອາກາດ ໂດຍຜ່ານກົນໄກການຫລຸດຜ່ອນການປ່ອຍອາຍພິດເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+) ແລະ ການປັບຕົວ ໂດຍການໃຫ້ບໍລິການຕ່າງໆ, ການພົວພັນກັນລະຫວ່າງປ່າໄມ້ ແລະ ການປ່ຽນແປງດິນຟ້າອາກາດ ຈະຕ້ອງມີຄວາມເຂົ້າໃຈກ່ຽວກັບບົດບາດຍິງ-ຊາຍກ່ອນ.

## ຄຳອະທິບາຍກ່ຽວກັບແຜ່ນໂຄສະນາ:

ແຜ່ນໂຄສະນານີ້ ສະແດງໄລຍະເວລາກ່ຽວກັບຫລັກຖານ ແລະ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດຕໍ່ປ່າໄມ້ ແລະ ການດຳລົງຊີວິດຂອງຊຸມຊົນທ້ອງຖິ່ນ ແຕ່ອະດີດຈົນເຖິງປະຈຸບັນ. ຊຶ່ງຈະສະແດງໃຫ້ເຫັນວ່າ ຜົນກະທົບຕໍ່ຜູ້ຍິງ ແລະ ຜູ້ຊາຍ ມີຄວາມແຕກຕ່າງກັນແນວໃດ?

ຕາຕະລາງລຸ່ມນີ້ເປັນການຍົກຕົວຢ່າງໃຫ້ເຫັນວ່າ: ຜູ້ຊາຍ ແລະ ຜູ້ຍິງໄດ້ຮັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດຕ່າງກັນແນວໃດ

| ຜົນກະທົບ | ຜົນກະທົບຫລັກຕໍ່ຜູ້ຊາຍ | ຜົນກະທົບຫລັກຕໍ່ຜູ້ຍິງ |
|---|---|---|
| ຝົນຕົກຫນັກ / ໄພນ້ຳຖ້ວມ | • ບໍ່ສາມາດໄປເຮັດວຽກ ຫລື ບໍ່ສາມາດໄປຫາເງິນມາໃຫ້ຄອບຄົວ<br>• ພາໃຫ້ຕົກງານ, ໃນທີ່ສຸດກໍ່ອອກບ້ານໄປຊອກຫາວຽກເຮັດງານທຳບ່ອນອື່ນ<br>• ໃຊ້ເວລາຫລາຍໃນການສ້ອມແປງເຮືອນຊານ ແລະ ຊັບສິນທີ່ເປເພຈາກໄພນ້ຳຖ້ວມ | • ອັດຕາການລອດຊີວິດຈາກໄພນ້ຳຖ້ວມມີນ້ອຍກວ່າເພາະວ່າຜູ້ຍິງມີສັກາຍຍະພາບ ແລະ ຄວາມສາມາດບໍ່ພຽງພໍໃນການຮັບມືກັບໄພນ້ຳຖ້ວມ<br>• ສູນເສຍແຫລ່ງອາຫານທີ່ມີຢູ່ໃນຄອບຄົວ<br>• ມີຄວາມສ່ຽງສູງຕໍ່ການເຈັບໄຂ້ຈາກການລະບາດຂອງພະຍາດ |
| ໄພແຫ້ງແລ້ງ | • ບໍ່ສາມາດໄປຫາເງິນມາໃຫ້ຄອບຄົວ<br>• ອອກບ້ານໄປເພື່ອຊອກຫາວຽກເຮັດງານທຳບ່ອນອື່ນ | • ຂາດແຄນອາຫານໃນຄອບຄົວ<br>• ຂາດແຄນນ້ຳດື່ມ, ນ້ຳໃຊ້, ຕ້ອງໃຊ້ເວລາຫລາຍຂຶ້ນ ແລະ ໄປໃນໄລຍະທາງໄກຂຶ້ນ ເພື່ອສະຫນອງນ້ຳໃຫ້ຄອບຄົວ, ເຊິ່ງພາໃຫ້ມີຄວາມສ່ຽງ |
| ຜົນຜະລິດຈາກປ່າໄມ້ ຕົກຕ່ຳ | • ສູນເສຍລາຍຮັບຈາກການຂາຍຜົນຜະລິດປ່າໄມ້<br>• ຈຳຕ້ອງອອກບ້ານໄປຊອກຫາວຽກເຮັດງານທຳເພີ່ມ ຈາກບ່ອນອື່ນ | • ສູນເສຍແຫລ່ງອາຫານທີ່ມີຢູ່ໃນຄອບຄົວ<br>• ໃຊ້ເວລາຫລາຍຂຶ້ນໃນການຫາເຄື່ອງປ່າຂອງດົງເພື່ອໃຊ້ ແລະຂາຍສ້າງລາຍຮັບໃຫ້ຄອບຄົວ |
| ຜົນຜະລິດກະສິກຳຕົກຕ່ຳ | • ລາຍຮັບຄອບຄົວຫລຸດລົງ<br>• ໃຊ້ເວລາຫລາຍຂຶ້ນ ແລະ ເຮັດວຽກຫນັກຂຶ້ນ<br>• ເພື່ອຫາລາຍໄດ້ເພີ່ມໃຫ້ຄອບຄົວຈຳຕ້ອງພັດພາກຈາກຄອບຄົວ ເພື່ອອອກບ້ານໄປຊອກຫາວຽກເຮັດງານທຳບ່ອນອື່ນ | • ຈຳຕ້ອງຊອກຫາວຽກເຮັດງານທຳເພີ່ມເພື່ອຫາເງິນຈຸນເຈືອຄອບຄົວ<br>• ສູນເສຍການຄ້ຳປະກັນດ້ານສະບຽງອາຫານໃນຄອບຄົວ<br>• ມີເວລາໜ້ອຍໃນການດູແລຕົນເອງ ແລະ ເດັກນ້ອຍ |
| ອຸນນະພູມມີການປ່ຽນແປງ/ປັ່ນປ່ວນ | • ມີບັນຫາສຸຂະພາບ<br>• ຊົ່ວໂມງເຮັດວຽກຫລຸດລົງ<br>• ລາຍຮັບຫລຸດລົງ | • ມີຄວາມສ່ຽງສູງ ຕໍ່ການປະເຊີນກັບບັນຫາສຸຂະພາບ<br>• ມີຄວາມກັງວົນຕໍ່ສະພາບບັນຫາສຸຂະພາບເດັກນ້ອຍ |

## ປະເດັນສຳຄັນ ທີ່ຜູ້ອຳນວຍຄວາມສະດວກ ຄວນຈະນຳໄປຖ່າຍທອດ

- ການປ່ຽນແປງດິນຟ້າອາກາດ ສົ່ງຜົນກະທົບຕໍ່ຫມົດທຸກຄົນ, ໂດຍບໍ່ຈຳແນກຊັ້ນວັນນະ, ຊົນເຜົ່າ, ເຊື້ອຊາດ, ຊົນຊັ້ນ ຫລື ເພດໄວ, ແຕ່ຜົນກະທົບທີ່ໄດ້ຮັບ ມີຄວາມແຕກຕ່າງກັນໄປ.
- ການປ່ຽນແປງດິນຟ້າອາກາດຍັງສົ່ງຜົນກະທົບຕໍ່ປ່າໄມ້ໃນຫລາຍຮູບແບບແລະຊຸມຊົນທີ່ອາໄສປ່າໄມ້ ກໍ່ໄດ້ຮັບຜົນກະທົບເຊັ່ນກັນ.
- ເນື່ອງຈາກວ່າຜູ້ຍິງ ເປັນຜູ້ທີ່ເພິ່ງພາອາໄສຊັບພະຍາກອນປ່າໄມ້ເພື່ອດຳລົງຊີບຫລາຍກວ່າຫມູ່, ແຕ່ມີຄວາມສາມາດໃນການຮັບມືກັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດນ້ອຍ, ເພາະສະນັ້ນ, ຜູ້ຍິງ ມັກຈະເປັນກຸ່ມທີ່ດ້ອຍໂອກາດ ໄດ້ຮັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ທີ່ກໍ່ໃຫ້ເກີດໄພພິບັດທາງທຳມະຊາດ.
- ຄວາມດ້ອຍໂອກາດ, ໂດຍສະເພາະ ແມ່ນແມ່ຍິງໃນຊົນນະບົດ ແມ່ນຮ້າຍແຮງກວ່າ ຍ້ອນມີການຈຳແນກເພດ ແລະ ຄວາມບໍ່ຍຸດຕິທຳໃນສັງຄົມ

## ຫມາຍເຫດ:

*ເນື້ອໃນແຜ່ນໂຄສະນາ ເປັນພຽງຂໍ້ແນະນຳສຳລັບຜູ້ອຳນວຍຄວາມສະດວກຂັ້ນຮາກຖານເທົ່ານັ້ນ. ເພື່ອນຳໃຊ້ແຜ່ນໂຄສະນານີ້ໃນການຝຶກອົບຮົມຂັ້ນຮາກຖານ,ຜູ້ອຳນວຍຄວາມສະດວກ ສາມາດປັບໃຊ້ໄດ້ຕາມສະຖານະການຕົວຈິງໃນທ້ອງຖິ່ນ.*

ພາລະໜ້າທີ່ຂອງ RECOFTC ແມ່ນເພື່ອຮັບປະກັນສິດທິຂອງປະຊາຊົນທ້ອງຖິ່ນ ໃຫ້ມີຄວາມໝັ້ນຄົງກວ່າເກົ່າ, ການປົກຄອງໄດ້ຮັບການປັບປຸງ ແລະ ປະຊາຊົນທ້ອງຖິ່ນ ໄດ້ຮັບຜົນປະໂຫຍດທີ່ເທົ່າທຽມ ໃນການດັດແປງພື້ນທີ່ປ່າໄມ້ ໃນເຂດພາກພື້ນອາຊີ ແລະ ປາຊີຟິກ ໃຫ້ມີຄວາມຍືນຍົງ.

ການເຊື່ອມບົດບາດຍິງ-ຊາຍເຂົ້າໃນວຽກງານການຄຸ້ມຄອງປ່າໄມ້ແບບຍືນຍົງ

ສະຫງວນລິຂະສິດ © ອົງການ RECOFTC ເດືອນຕຸລາ 2015

ບາງກອກ ປະເທດ ໄທ

ແຕ້ມໂດຍ: ທ່ານນາງ ຈູທາມາສ ປຣະມູນມາກ

ຜູ້ຖືລິຂະສິດທີ່ສະໜອງແຫຼ່ງຂໍ້ມູນຮັບຮູ້ຢ່າງເຕັມທີ່ ແລະ ອະນຸຍາດໃຫ້ພິມຄືນແຜ່ນໂຄສະນາສະບັບນີ້ ເພື່ອຈຸດມຸ້ງໝາຍທາງດ້ານການສຶກສາ ຫຼື ບໍ່ແມ່ນເພື່ອຈຸດມຸ້ງໝາຍທາງດ້ານການຄ້າ ໂດຍບໍ່ຕ້ອງຂຽນຂໍອະນຸຍາດລ່ວງໜ້າຈາກບັນດາຜູ້ຖືລິຂະສິດ. ຫ້າມພິມຄືນແຜ່ນໂຄສະນາສະບັບນີ້ ເພື່ອຂາຍ ຫຼື ຈຸດປະສົງທາງດ້ານການຄ້າອື່ນໆ ໂດຍບໍ່ໄດ້ ຮັບອະນຸຍາດເປັນລາຍລັກອັກສອນຈາກຜູ້ຖືລິຂະສິດ.

ສຳລັບຂໍ້ມູນລາຍລະອຽດ, ກະລຸນາຕິດຕໍ່
ອົງການ RECOFTC ປະຈຳ ສປປ ລາວ
ຄຸ້ມທາດດຳ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ
ຫມາຍເລກໂທລະສັບ: 856 21 219512 ເວັບໄຊທ: www.recoftc.org

Norad THE CENTER FOR PEOPLE AND FORESTS